## ໜ່ວຍງານຮັບຜິດຊອບ ກ່ຽວກັບ ຜູ້ສູງອາຍຸໃນເຂດເມືອງ Milwaukee ໃຫ້ການບໍລິການສຳລັບຜູ້ສູງອາຍຸແຕ່ 60 ປີຂຶ້ນໄປ

*ໄດ້ຮັບການຄຸ້ມຄອງໂດຍຄະນະກຳມະການທາງດ້ານວິໄສທັດຕໍ່ຜູ້ສູງອາຍຸເພື່ອປັບປຸງດ້ານສຸຂະພາບ ແລະ ຄວາມເປັນຢູ່ທີ່ດີ ແກ່ຜູ້ສູງອາຍຸທຸກຄົນທີ່ຢູ່ໃນເມືອງ Milwaukee ໂດຍການຮັບຮູ້ແລະ ການກ້າວຂ້າມການຈຳແນກຕ່າງໆ, ສົ່ງເສີມການເຂົ້າເຖິງສາທາລະນະສຸກທີ່ເທົ່າທຽມ, ປັບປຸງຂອດການສື່ສານ ແລະ ສົ່ງເສີມການຮ່ວມມື, ແລະ ແກ້ໄຂທຸກບັນຫາທີ່ຈະສົ່ງຜົນຕໍ່ກັບຄວາມຢູ່ດີກິນດີ, ຊຶ່ງໜ່ວຍງານຮັບຜິດຊອບ ກ່ຽວກັບ ຜູ້ສູງອາຍຸໃນເຂດເມືອງ Milwaukee ຈະ:*

- *ໃຫ້ການສະໜັບສະໜູນຢ່າງຮອບດ້ານ, ໃຫ້ຄວາມຮ່ວມມື, ຖືເອົາການໃຫ້ບໍລິການໃນເຄືອຂ່າຍຊຸມຊົນເປັນຫຼັກ ແລະ ໃຫ້ຄວາມຊ່ວຍເຫຼືອແກ່ຜູ້ສູງອາຍຸ.*
- *ການລະດົມທຶນ, ການສະໜັບສະໜູນທາງສັງຄົມ, ການຄົມມະນາຄົມຂົນສົ່ງ, ດ້ານໂພຊະນາການ, ຸຄວາມເປັນຢູ່ທີ່ດີ, ດ້ານກົດໝາຍ, ແລະ ການຊ່ວຍເຫຼືອເບິ່ງແຍງ ໂດຍຜ່ານກົດໝາຍວ່າດ້ວຍຜູ້ສູງອາຍຸຂອງອາເມລິກາ.*
- *ການສົ່ງເສີມການມີສ່ວນຮ່ວມທາງສັງຄົມໃນຊຸມຊົນໂດຍຜ່ານຄະນະກຳມາທິການ ວ່າດ້ວຍ ສະພາ ແລະ ຄະນະກຳມະການຜູ້ສູງອາຍຸ, ເປີດໂອກາດໃຫ້ແກ່ອາສາສະໝັກ, ແລະ ເຄືອຂ່າຍຂອງສູນດູແລຜູ້ອາວຸໂສ.*

## *ລົງມາຮ່ວມກັນ ເພື່ອສ້າງຊຸມຊົນທີ່ມີສຸຂະພາບດີ*

*ໂຄງການຂອງໜ່ວຍງານຮັບຜິດຊອບຜູ້ສູງອາຍຸໃນເຂດເມືອງ Milwaukee ໄດ້ຮັບການສະໜັບສະໜັບສ່ວນໜຶ່ງໂດຍອົງການຄຸ້ມຄອງຊີວິການເປັນຢູ່ຂອງຊຸມຊົນ (ACL), ກະຊວງສາທາລະນະສຸກແລະ ການບໍລິການ ແຫ່ງ ປະເທດ ສະຫະລັດອາເມລິກາ ໂດຍຜ່ານ ການຊ່ວຍເຫຼືອທາງດ້ານການເງິນ ພາຍໃຕ້ກົດໝາຍວ່າດ້ວຍຜູ້ສູງອາຍຸຂອງອາເມລິກາ.*

MILWAUKEE COUNTY
DEPARTMENT OF HEALTH
& HUMAN SERVICES
**AGING & DISABILITIES SERVICES**

1220 West Vliet Street, Suite 300 | Milwaukee, WI 53205
(414) 289-6874 | Fax: (414) 289-8568
county.milwaukee.gov | caregiversuport@milwaukeecountywi.gov

## ການບໍລິການແກ່ຜູ້ສູງອາຍຸ & ຜູ້ພິການ ໃນເມືອງ MILWAUKEE

# ໂຄງການສະໜັບສະໜຸນໂດຍຜູ້ໃຫ້ການດູແລ



**MILWAUKEE COUNTY**

ສຳລັບຂໍ້ມູນເພີ່ມເຕີມ ຕິດຕໍ່ຫາພວກເຮົາໄດ້ທີ່
ເບີ (414) 289-6874

# ໃຫ້ການສະໜັບສະໜູນແກ່ທ່ານໃນຂະນະທີ່ທ່ານກໍໃຫ້ການຊ່ວຍເຫຼືອແກ່ຜູ້ອື່ນ

## ພວກເຮົາຈະຢູ່ນະທີ່ນີ້ກັບທ່ານຕາບໃດທີ່ທ່ານຍັງມີຄວາມເປັນຫວ່ງເປັນໃຍຜູ້ອື່ນ

ທ່ານເປັນຍາດພີ່ນ້ອງ, ເພື່ອນຮ່ວມງານ, ຄູ່ສົມລົດ, ຫຼື ຊ່ວຍເຫຼືອແກ່ຄົນທີ່ທ່ານຮັກໃນໜ້າວຽກປະຈຳວັນ ເພື່ອໃຫ້ພວກເຂົາເຈົ້າປອດໄພ, ສະດວກສະບາຍ, ແລະ ມີຄວາມສຸກບໍ? ຫາກເປັນແນວນັ້ນ, ທ່ານຄືຜູ້ໃຫ້ການດູແລຜູ້ປວຍ ແລະ ພວກເຮົາຈະຢູ່ນະທີ່ນີ້ເພື່ອຄອຍໃຫ້ການສະໜັບສະໜຸນແກ່ທ່ານ! ໂຄງການໃຫ້ຄວາມຊ່ວຍເຫຼືອແກ່ຜູ້ໃຫ້ການດູແລຜູ້ປ່ວຍໃນເມືອງ Milwaukee ສະໜອງການບໍລິການ, ການສຶກສາ, ແລະ ເຜີຍແຜ່ກ່ຽວກັບວຽກງານການສົ່ງເສີມສຸຂະພາບ ແລະ ຄວາມເປັນຢູ່ທີ່ດີຂອງຜູ້ໃຫ້ການດູແລ ເນື່ອງຈາກວ່າ ພວກເຂົາໃຫ້ການຊ່ວຍເຫຼືອທີ່ສຳຄັນແກ່ຜູ້ອື່ນ.

## ການບໍລິການຕ່າງໆເມື່ອທ່ານຕ້ອງການ

- ແຫຼ່ງການເງິນສຳລັບຜູ້ໃຫ້ການດູແລເພື່ອໝູນໃຊ້ໃນການດູແລຕົນເອງ, ການພັກຜ່ອນ, ແລະ ການຊ່ວຍເຫຼືອທີ່ຈຳເປັນອື່ນໆ
- ການລົງໄປຢ້ຽມຢາມເຮືອນ ແລະ ການໂທຂໍຄຳປຶກສາ ເພື່ອປະເມີນ ແລະ ເບິ່ງຄວາມແທດເໝາະຕາມຄວາມຕ້ອງການຂອງຜູ້ໃຫ້ການດູແລ
- ການເຊື່ອມຕໍ່ກັບແຫຼ່ງຂໍ້ມູນ ແລະ ການບໍລິການຕ່າງໆ





# ແຫຼ່ງການເງິນແກ່ຜູ້ໃຫ້ການດູແລຜູ້ປ່ວຍ

## ໂຄງການສະໜັບສະໜຸນໂດຍຜູ້ໃຫ້ການດູແລຄອບຄົວແຫ່ງຊາດ

***ການຊ່ວຍເຫຼືອທາງດ້ານການເງິນໃຫ້ແກ່ການຝຶກອົບຮົມ, ການສ້ອມແປງເຮືອນ, ການດູແລຕົນເອງ, ການພັກຜ່ອນ, ແລະ ຄວາມຕ້ອງການອື່ນໆຂອງຜູ້ໃຫ້ການດູແລຜູ້ປ່ວຍ***

ມີໃຜແດ່ທີ່ສາມາດເຂົ້າຮ່ວມໄດ້?

- ຜູ້ໃຫ້ການດູແລຜູ້ເຖົ້າແບບບໍ່ເປັນທາງການ ທີ່ເບິ່ງແຍງຜູ້ທີ່ມີອາຍຸແຕ່ 60 ປີຂຶ້ນໄປ ຫຼື ຜູ້ທີ່ເປັນພະຍາດສະໝອງເສື່ອມໃນເກນອາຍຸທີ່ບໍ່ໄດ້ມີການລົງທະບຽນຢູ່ໃນໂຄງການເບິ່ງແຍງໄລຍະຍາວຕາມນະໂຍບາຍ Medicaid ຫຼື ຢູ່ໃນການດູແລຂອງສູນດູແລສຸຂະພາບ.
- ພໍ່ຕູ້ແມ່ຕູ້ ແລະ ຍາດພີ່ນ້ອງທີ່ມີອາຍຸແຕ່ 55 ປີ ຂຶ້ນໄປ ທີ່ເປັນຜູ້ໃຫ້ການດູແລຂັ້ນພື້ນຖານແກ່ເດັກນ້ອຍ ຫຼື ຜູ້ໃຫຍ່ທີ່ເປັນຄົນພິການ.

## ໂຄງການຊ່ວຍເຫຼືອຄອບຄົວ ແລະ ຜູ້ໃຫ້ການດູແລຜູ້ປ່ວຍໂລກຄວາມຈຳເສື່ອມ (Alzheimer)

***ການຊ່ວຍເຫຼືອທາງດ້ານການເງິນສຳລັບຜູ້ໃຫ້ການດູແລຊົ່ວຄາວທີ່ໃຫ້ການດູແລເປັນຊ່ວງ, ສິນຄ້າ, ຫຼື ການບໍລິການທີ່ຈຳເປັນເພື່ອຊ່ວຍເບິ່ງແຍງຜູ້ທີ່ເປັນໂລກສະໝອງເສື່ອມທີ່ບໍ່ສາມາດກັບຄືນສູ່ສະພາບເດີມໄດ້.***

ມີໃຜແດ່ທີ່ສາມາດເຂົ້າຮ່ວມໄດ້?

- ຜູ້ໃຫ້ການດູແລແກ່ບຸກຄົນທີ່ບໍ່ເປັນທາງການສຳລັບຜູ້ຄົນໃນທຸກໄວທີ່ມີການວິນິດໄສວ່າເປັນພະຍາດຄວາມຈຳເສື່ອມ (Alzheimer) ຫຼື ໂລກສະໜມອງເສື່ອມອື່ນໆ ເມື່ອບຸກຄົນເຫຼົ່ານັ້ນໄດ້ຮັບການບົ່ງມະຕິວ່າ:
  - ອາໄສຢູ່ໃນຊຸມຊົນ ຫຼື ຢູ່ເຮືອນ
  - ບໍ່ໄດ້ລົງທະບຽນໃນໂຄງການການດູແລໄລຍະຍາວ
  - ມີລາຍໄດ້ລວມປະຈຳປີ ຢູ່ທີ່ $48,000 ຫຼື ໜ້ອຍກວ່າ (ລວມທັງລາຍຮັບຂອງຜົວ ຫຼື ເມຍ).

**ໜ່ວຍງານຮັບຜິດຊອບ ກ່ຽວກັບ ຜູ້ສູງອາຍຸໃນເຂດເມືອງ MILWAUKEE**

**ສຶກສາເພີ່ມເຕີມໄດ້ທີ່ເບີ 414-289-6874 ຫຼື ອີເມວ caregiversupport@milwaukeecountywi.gov**